# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດທີ 6 ມິຖຸນາ 2021 (06-06-2021)**

## ສະແດງອຸປນິສັຍດ້ວຍຄວາມຮັກ.

*ເມື່ອໃດທ່ານໄດ້ເຮັດບາງສິ່ງບາງຢ່າງແບບບ້າໆເພື່ອຄວາມຮັກ?*

**ຈຸດສຳຄັນໃນບົດຮຽນ:**ຈົ່ງຍຶດໝັ້ນເປັນພື້ນຖານທຸກສິ່ງທຸກຢ່າງທີ່ທ່ານເຮັດໃນຄວາມຮັກສຳລັບພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທຸກໆຄົນເຄີຍໄດ້ມີຄວາມຮັກແລກໃນຊີວິດ. ທ່ານຈົດຈຳຂອງທ່ານໄດ້ບໍ່? ມັນອາດເປັນການສົນໃຈໃນໄວເດັກ ຫຼື ຄວາມຫຼົງໄຫຼໃນວັຍລຸ້ນ. ບາງຄົນໃຊ້ຄຳເວົ້າວ່າ "ຄວາມຮັກໝານ້ອຍ" ("puppy love"). ສຳລັບບາງຄົນແມ່ນລະຫວ່າງການເລີ່ມຕົ້ນຂອງຊີວິດ, ແຕ່ລາງຄົນອາດເປັນພາຍຫຼັງ. ແລະຫຼາຍຄົນໃນພວກເຮົາທຳງານໜັກ (ກ່ຽວກັບ-ເຣື່ອງນີ້), ແມ້ກະທັ້ງເຮັດສິ່ງບ້າໆບໍໆເພື່ອໃຫ້ຄົນນັ້ນຕອບສນອງແລະຮັກເຮົາຄືນ. ໃນຂນະທີ່ຂ້ອຍທວນຄືນຫຼັງຄວາມຮັກແລກໃນວັຍເດັກ, ມັນເບິ່ງຄືວ່າການຂວ້າງກ້ອນຫີນໃສ່ນາງ(ຕີ້ເອົາ)ເພື່ອໃຫ້ນາງຮັກເຮົາບໍ່ໄດ້ແມ່ນວິທີທີ່ສລາດທີ່ສຸດ! ເມື່ອທ່ານມີຄວາມເຊື່ອໃນພຣະຄຣິດຄັ້ງແລກ, ທ່ານຈຳໄດ້ບໍ່ວ່າທ່ານຮັກພຣະອົງແບບໃດ? ບໍ່ເໝືອນກັບການຮັກຫຼົງໄຫຼໃນວັຍເດັກ, ທ່ານໄດ້ຮູ້ວ່າທ່ານບໍ່ຈຳເປັນຕ້ອງທຳງານໜັກເພື່ອເຮັດໃຫ້ ພຣະອົງຮັກທ່ານຄືນ. ວັນເວລາຜ່ານໄປ, ພວກເຮົາຫຍຸ້ງຢູ່ກັບການເຮັດສິ່ງຕ່າງໆແລະອາດຈະເລີ່ມຄິດວ່າວຽກຂອງພວກເຮົາສຳລັບພຣະອົງແມ່ນພາກສ່ວນທີ່ສຳຄັນທີ່ສຸດຂອງຄວາມສັມພັນຂອງພວກເຮົາ. ດັ່ງທີ່ພວກເຮົາຈະໄດ້ເຫັນໃນຄຳສອນຂອງອົງພຣະເຢຊູໃນພຣະຄັມພີພຣະນິມິດ ເຖິງຄຣິສຕະຈັກເອເຟໂຊ, <u>ວຽກງານບໍ່ສາມາດທົດແທນຄວາມຈຳເປັນທີ່ຈະຮັກສາຄວາມຮັກແລກຂອງພວກເຮົາໄວ້ໃນທີ່ໆຖືກຕ້ອງ</u>. ***<u>ພວກເຮົາຈຳເປັນຕ້ອງກັບມາຫາຄວາມຮັກແລກສຳລັບພຣະຄຣິດ.</u>***

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

1. **<u>ພຣະນິມິດ 2:1-3</u>**

*[1]"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງເອເຟໂຊວ່າ, 'ພຣະອົງຜູ້ຊົງຖືດາວທັງເຈັດໄວ້ໃນພຣະຫັດເບື້ອງຂວາແລະສະເດັດໄປມາໃນຖ້າມກາງເຄື່ອງຮອງຕີນໂຄມທອງຄຳທັງເຈັດນັ້ນຊົງກ່າວດັ່ງນີ້ວ່າ, [2]"ເຮົາຮູ້ຈັກການກະທຳຂອງເຈົ້າ, ຮູ້ຈັກຄວາມເພື່ອຍຍາກແລະຄວາມພຽນອົດທົນຂອງເຈົ້າແລະຮູ້ຈັກວ່າເຈົ້າບໍ່ສາມາດທົນຕໍ່ຄົນຊົ່ວເຈົ້າໄດ້ລອງໃຈຄົນເຫຼົ່ານັ້ນທີ່ອວດວ່າເປັນອັຄສາວົກແຕ່ເຂົາບໍ່ເປັນແລະເຈົ້າເຫັນວ່າເຂົາເປັນຄົນປອມ.[3]ເຮົາຮູ້ວ່າເຈົ້າຍັງມີຄວາມອົດທົນແລະໄດ້ອົດເອົາເພາະເຫັນແກ່ນາມຂອງເຮົາແລະໄດ້ເມື່ອຍລ້າໄປ.*

ຫຼາຍປີມາແລ້ວ ໄດ້ມີຊາຍຄົນນຶ່ງໄດ້ຮັບເຊື່ອໃນອົງພຣະເຢຊູ. ກ່ອນໜ້ານັ້ນບໍ່ດົນລາວໄດ້ຮັບໃຊ້ຢູ່ໃນຫຼາຍໆສະຖານທີ່ອ້ອມຮອບໂບດ. ລາວເປັນຊາຍສຸພາບໃຈດີທີ່ພັດທະນາຫົວໃຈທອງຄຳເມື່ອເວົ້າເຖິງການຮັບໃຊ້. ລາວມັກການຮັບໃຊ້ໂດຍບໍ່ຢາກອອກໜ້າອອກຕາ. ເຖິງຢ່າງໃດກໍ່ຕາມ, ຫຼັງຈາກຫຼາຍເດືອນ, ການປະພຶດຂອງລາວເລີ່ມປ່ຽນແປງເພາະວ່າການຮັບໃຊ້ບໍ່ໄດ້ເຮັດໃຫ້ລາວມີຄວາມສຸກຄືກັນກັບທີ່ລາວໄດ້ເຮັດໃນຕອນຕົ້ນ.

ໃນໂອກາດນີ້ງ, ພວກເຮົາໄດ້ມີການສົນທະນາກັນເຊິ່ງຂ້າພະເຈົ້າໄດ້ບອກລາວວ່າຂ້າພະເຈົ້າຮູ້ບຸນຄຸນໃນການເຮັດວຽກຢ່າງໜັກເພື່ອ ເຮັດໃຫ້ຄຣິສຕະຈັກເປັນບ່ອນທີ່ດີກວ່າເກົ່າ. ລາວໄດ້ຮັບສາຣະພາບກ່ຽວກັບເຣື່ອງນີ້, ຕອນທີ່ລາວໄດ້ມາຮູ້ຈັກພຣະເຈົ້າໃໝ່ໆ ລາວໄດ້ຮັບໃຊ້ດ້ວຍຄວາມຮັກຕໍ່ພຣະເຢຊູ. ເຖິງຢ່າງໃດກໍ່ຕາມ, ລະຫວ່າງທາງ, ລາວເລີ່ມຄິດວ່າລາວຈຳເປັນຕ້ອງເຮັດວຽກນັ້ນ ເພາະວ່າຖ້າລາວບໍ່ເຮັດມັນກໍຈະບໍ່ມີໃຜເຮັດ. <u>ການຮັບໃຊ້ຂອງລາວສຳລັບພຣະຄຣິດໄດ້ປ່ຽນເປັນງານຈາກລາຍການທີ່ຕ້ອງເຮັດ (to-do list). ຄືເຮັດດ້ວຍຄວາມຈຳເປັນຫຼືບໍ່ເຕັມໃຈເຮັດ!</u>

ສະພາບການຄ້າຍຄືກັນນີ້ໄດ້ເກີດຂຶ້ນທີ່ຄຣິສຕະຈັກເມືອງເອເຟໂຊ. ເມືອງເອເຟໂຊຕັ້ງຢູ່ທີ່ຊຸມທາງຂອງຄວາມສີວິລັຍຢ່າງແທ້ຈິງ. ພຣະວິຫານຂອງໄດແອນນາ, ມັນໄດ້ເປັນຈຸດສູນກາງຂອງການນະມັສການເພື່ອຄວາມອຸດົມສົມບູນ. ເມືອງເອເຟໂຊໄດ້ເປັນເມືອງຊຶ່ງເຕັມໄປດ້ວຍສາສນາຂອງຄົນຕ່າງດ້າວ.

ຄຣິສຕະຈັກທີ່ເມືອງເອເຟໂຊໄດ້ເຕັມໄປດ້ວຍຜູ້ຄົນທີ່ທຸ້ມເທປະຕິບັດຮັບໃຊ້ພຣະເຈົ້າ ແລະທຳດີທີ່ສຸດເພື່ອດຳເນີນຢູ່ໃນທາງແຫ່ງຄວາມສັມພັນກັບພຣະອົງຕໍ່ໄປ ເຖິງແມ່ນວ່າຈະມີທາງເລືອກແລະການລໍ້ລວງທີ່ຊົ່ວຮ້າຍທັງໝົດທີ່ມີໃຫ້ແກ່ພວກເຂົາເຈົ້າຢູ່ທີ່ເມືອງນັ້ນ. ພຣະເຢຊູໄດ້ຊົງຮັບຮູ້ຄຣິສຕະຈັກສຳລັບວຽກທີ່ດີຂອງພວກເຂົາເຈົ້າແລະສຳລັບການເຮັດຕາມເສັ້ນທາງນັ້ນ. ຄວາມພາກພຽນແລະຄວາມອົດທົນຂອງພວກເຂົາເຈົ້າເປັນສິ່ງທີ່ໜ້າຍົກຍ້ອງຊົມເຊີຍ. ຊາວເອເຟໂຊທີ່ມີຄວາມເຊື່ອເປັນທີ່ໜ້າຮູ້ຈັກສຳລັບວຽກງານທີ່ດີແລະດຸໝັ່ນຂອງພວກເຂົາເຈົ້າ.

ສິ່ງທີ່ພວກເຮົາເຮັດເພື່ອພຣະຄຣິດແລະພຣະຣາຊອານາຈັກຂອງພຣະອົງນັ້ນມີຄວາມສຳຄັນ. ພວກເຮົາອາດຈະຄິດວ່າວຽກງານຂອງພວກເຮົານັ້ນບໍ່ສຳຄັນ<u>ຖ້າວ່າ</u>ບໍ່ມີຜູ້ໃດເຫັນຫຼືບໍ່ມີຜູ້ໃດຮັບຮູ້, ແຕ່ພຣະເຈົ້າຊົງມອງເຫັນສິ່ງທີ່ພວກເຮົາກຳລັງເຮັດຢູ່. ພວກເຮົາຈຳເປັນຕ້ອງເປັນທີ່ຮູ້ຈັກ<u>ໂດຍວຽກງານທີ່ດີ</u>. ວຽກງານທີ່ສັດຊື່ຂອງພວກເຮົາຊີ້ໃຫ້ຄົນອື່ນໄປສູ່ພຣະເຢຊູ. <u>*ການຮັບໃຊ້ທີ່ຈິງຮັກພັກດີເສີມພລັງ ແລະ ເສີມສ້າງຄຣິສຕະຈັກໃຫ້ເຂັ້ມແຂງຈະເຣີນເຕີບໂຕ.*</u>

*ອີງຕາມຂໍ້ພຣະຄັມພີນີ້, ທ່ານຈະບັນລະຍາຍຄຣິສຕະຈັກແຫ່ງເມືອງເອເຟໂຊວ່າເປັນແບບໃດ?*

## 2. <u>ພຣະນິມິດ 2:4-6</u>

*4 ແຕ່ເຮົາມີຂໍ້ຕໍ່ວ່າເຈົ້າຄືເຈົ້າໄດ້ປະຖິ້ມຄວາມຮັກເດີມຂອງເຈົ້າເສັຽ. 5 ເຫດສັນນັ້ນຈົ່ງລະນຶກວ່າເຈົ້າໄດ້ຕົກຈາກສະພາບໃດແລ້ວຈົ່ງກັບໃຈເສັຽໃໝ່ແລະເຮັດຕາມຢ່າງເດີມຖ້າບໍ່ດັ່ງນັ້ນເຮົາຈະມາຫາເຈົ້າແລະຈະຍົກເຄື່ອງຮອງຕີນໂຄມຂອງເຈົ້າອອກຈາກບ່ອນມັນເວັ້ນໄວ້ແຕ່ເຈົ້າຈະກັບໃຈເສັຽໃໝ່. 6 ດີແຕ່ເຈົ້າຍັງມີສິ່ງນີ້ຄືເຈົ້າກຽດຊັງກິຈການຂອງພວກນີໂກລາຍເຕຊຶ່ງເຮົາເອງກໍກຽດຊັງເໝືອນກັນ.*

ກັບໄປຫາການສົນທະນາກ່ຽວເຣື່ອງຊາຍຄົນນຶ່ງຈາກໂບດຂອງຂ້າພະເຈົ້າ. ໃນຂນະທີ່ພວກເຮົາສືບຕໍ່ເວົ້າຈາ, ພວກເຮົາພົບວ່າລາວບໍ່ໄດ້ກາຍເປັນຄົນຂົມຂື່ນແລະແຄ້ນໃຈໃນການຮັບໃຊ້ເພາະວ່າຂາດການຮັບຮູ້. ທ່າທາງກ່ຽວກັບການຮັບໃຊ້ຂອງລາວໄດ້ປ່ຽນແປງໄປຍ້ອນເຫດວ່າ<u>ພຣະເຢຊູບໍ່ໄດ້ເປັນຄວາມຮັກແລກຂອງລາວອີກແລ້ວ</u>. ລາວໄດ້ລືມໄປແລ້ວວ່າແມ່ນແນວໃດຄືການຮັບໃຊ້*ພຽງແຕ່ຍ້ອນຄວາມຮັກຂອງລາວຕໍ່ພຣະເຢຊູ.*

ອົງພຣະເຢຊູໄດ້ຊົງກ່າວປະນາມຄຣິສຕະຈັກເມືອງເອເຟໂຊດ້ວຍເຫດຜົນນີ້ເອງ: <u>ພວກເຂົາເຈົ້າໄດ້ເຮັດໃຫ້ຄວາມຮັກແລກນັ້ນເສັຽໄປ</u>. ໃນຂນະທີ່ພວກເພິ່ນຍັງໄດ້ເຮັດວຽກງານທີ່ດີຢູ່, ຍັງແຂງແຮງຢູ່, ແລະຍັງມຸ່ງໝັ້ນບໍ່ຍອມຈຳນົນຕໍ່ພະຍາມານ; ພວກເຂົາເຈົ້າໄດ້ທົດແທນຄວາມສຳຄັນອັນດັບນຶ່ງຄືຄວາມຮັກຕໍ່ພຣະເຢຊູດ້ວຍການຈົດຈໍ່ໃຈໃສ່ລາຍການ (ບັນຊີ) ຂອງສິ່ງທີ່ພວກເພິ່ນຮູ້ວ່າຈຳເປັນຕ້ອງເຮັດ.

ການກ່າວຟ້ອງຂອງພຣະເຢຊູເຣື່ອງຄຣິສຕະຈັກເມືອງເອເຟໂຊໄດ້ປະລະຖິ້ມຄວາມຮັກແລກຂອງພວກເຂົ້າເຈົ້າເປັນການຕັກເຕືອນແກ່ພວກເຮົາທັງໝົດ. ພວກເຮົາຈະໄດ້ຮັບຜົນປໂຍດໃນການກວດກາຕົນເອງເປັນປະຈຳກ່ຽວກັບ

ເຣື່ອງນີ້: **<u>ຂ້າພະເຈົ້າໄດ້ເສັຽຄວາມຮັກແລກໄປແລ້ວຫຼືຍັງ?</u>**

ມັນສາມາດລືມໄດ້ໂດຍງ່າຍດາຍວ່າມັນເປັນແນວໃດໃນເມື່ອເວລາພວກເຮົາມາຫາພຣະເຢຊູຄັ້ງແລກໃນຊີວິດ. ຄວາມຮູ້ສຶກອັນລົ້ນເຫຼືອຂອງຄວາມຮັກຕໍ່ສິ່ງທີ່ພຣະຄຣິດໄດ້ຊົງກະທຳເພື່ອພວກເຮົາໂດຍຜ່ານຄວາມລອດຂອງພຣະອົງແລະພວກເຮົາເລີ່ມຕົ້ນຍອມຮັບມັນ. ຄຣິສຕະຈັກເມືອງເອເຟໂຊກໍໄດ້ເຮັດເຊັ່ນນັ້ນ, ແລະພຣະເຢຊູຊົງບອກພວກເພິ່ນໃຫ້ຈົດຈຳວ່າພວກເຂົາເຈົ້າລົ້ມເຫຼວຈາກສິ່ງນັ້ນຫຼາຍພຽງໃດ? ເວົ້າອີກຢ່າງນຶ່ງ, ພວກເຂົາເຈົ້າສົມຄວນທວນລະລຶກເຖິງອະດີດເບື້ອງຕົ້ນທີ່ພວກເພິ່ນໄດ້ມາຫາພຣະເຢຊູແລະຈົດຈຳຄວາມຮັກແລກແລະຄວາມຊົມຊື່ນຍິນດີນັ້ນ.

ຄຣິສຕະຈັກເມືອງເອເຟໂຊໄດ້ຖືກບອກໃຫ້ຖິ້ມໃຈເກົ່າເອົາໃຈໃໝ່, ປ່ຽນທິດທາງ, ແລະກັບມາຫາຄວາມຮັກທີ່ພວກເພິ່ນໄດ້ມີມາແຕ່ເລີ່ມຕົ້ນແລະວຽກງານທີ່ພວກເພິ່ນໄດ້ປະຕິບັດ. ຈົ່ງຈຳໄວ້ວ່າຄຣິສຕະຈັກເມືອງເອເຟໂຊເປັນຄຣິສຕະຈັກທີ່ດີ, ໄດ້ເຮັດການດີແລະສິ່ງທີ່ໜ້າຊົມເຊີຍຫຼາຍຢ່າງ. ແຕ່ວ່າທຸກໆວຽກງານທີ່ພວກເຮົາເຮັດສົມຄວນເຮັດດ້ວຍຄວາມຮັກຕໍ່ພຣະເຈົ້າແລະຄວາມປາຖນາທີ່ຈະໃຫ້ພຣະອົງພໍ ພຣະທັຍດ້ວຍເຫດແຫ່ງຂອງປະທານຂອງຄວາມລອດພົ້ນອັນຍິ່ງໃຫຍ່ທີ່ພຣະອົງໄດ້ຊົງປະທານໃຫ້ແກ່ພວກເຮົາໂດຍລາຄາມະຫາສານແຫ່ງຊີວິດຂອງພຣະອົງເອງ. ພວກເຮົາສົມຄວນທີ່ຈະເຮັດວຽກແລະປະຕິບັດຮັບໃຊ້ດ້ວຍຄວາມຮັກ**<u>ທີ່ຮັກສາພຣະອົງໃນຖານະທີ່ນຶ່ງ</u>**. ວຽກງານທີ່ດີຂອງພວກເຮົາຕ້ອງຈະເຣີນເຕີບໂຕຂຶ້ນຈາກຄວາມຮັກຂອງພວກເຮົາສຳລັບພຣະອົງ. *<u>ເພື່ອໃຫ້ຊີວິດຂອງພວກເຮົາມີລັກສະນະໂດຍຄວາມຮັກ, ຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະເຢຊູຕ້ອງຖືກຮັກສາໄວ້ເປັນອັນດັບທີ່ນຶ່ງ</u>*.

*ພວກເຮົາສາມາດຮັກສາຄວາມຮັກຕໍ່ພຣະເຢຊູຄຣິດໃຫ້ເປັນລະດັບຄວາມສຳຄັນສູງສຸດໃນຊີວິດຂອງພວກເຮົາໄດ້ຢ່າງໃດ?*

## 3. <u>ພຣະນິມິດ 2:7</u>

*[7] "ຜູ້ໃດມີຫູຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ. ຜູ້ໃດມີໄຊຊະນະ, ເຮົາຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ສຳລັບຊີວິດ, ຊຶ່ງຢູ່ໃນເທພອຸທຍານຂອງພຣະເຈົ້າ."*

ເມື່ອຍັງເປັນເດັກນ້ອຍ, ພວກເຮົາທຸກຄົນອາດໄດ້ມີປະສົບການເມື່ອເວລາຜູ້ໃຫຍ່ກ່າວຟ້ອງພວກເຮົາວ່າບໍ່ຍອມຟັງຄວາມ. ບາງທີ ພໍ່ແມ່ຂອງພວກເຮົາສັ່ງໃຫ້ພວກເຮົາເຮັດສິ່ງໃດສິ່ງນຶ່ງແລ້ວພວກເຮົາບໍ່ເຮັດ. ບາງທີ ນາຍຄູແບ່ງປັນຂໍ້ມູນທີ່ສຳຄັນຊຶ່ງຈະຊ່ອຍພວກເຮົາສອບເສັງຜ່ານ. ບາງທີ ສິດຍາພິບານເທສນາຊຶ່ງຈະຮັກສາພວກເຮົາໃຫ້ຢູ່ໃນລູ່ທາງ(on track)ໃນຄວາມສັມພັນຂອງພວກເຮົາກັບພຣະເຈົ້າ. ຖ້າຫາກພວກເຮົາສັດຊື່, ເຮົາໝົດທຸກຄົນບໍ່ວ່າໃນເວລາໃດກໍເວລານຶ່ງສາມາດຖືກຕັດສິນວ່າມີຄວາມຜິດໃນການບໍ່ເຊື່ອຟັງ. <u>ຄວາມລົ້ມເຫຼວໃນການຮັບຟັງໃນທຸກສະຖານະການສ່ວນໃຫຍ່ກໍ່ໃຫ້ເກີດຜົນສະທ້ອນທາງລົບ</u> (ຜົນເສັຽ ຫຼື ນຳມາຊຶ່ງການເສັຽຫາຍ).

*ແມ່ນວິຖີທາງໃດແດ່ທີ່ຄຣິສຕະຈັກຂອງພວກເຮົາຄ້າຍຄືກັບຄຣິສຕະຈັກແຫ່ງເມືອງເອເຟໂຊ?*

ພຣະເຢຊູໄດ້ຊົງຕັກເຕືອນຄຣິສຕະຈັກເມືອງເອເຟໂຊໃຫ້ແນ່ໃຈແລະຮັບຟັງວ່າພຣະວິນຍານບໍຣິສຸດຊົງກ່າວຫຍັງກັບພວກເພິ່ນ. ແຕ່ວ່າຄວາມຈິງທີ່ພຣະເຢຊູໄດ້ຊົງສອນໄວ້ບໍ່ແມ່ນສຳລັບແຕ່ພວກເພິ່ນເທົ່ານັ້ນ: ແມ່ນສຳລັບທຸກຄົນທີ່ມີຄວາມປາຖນາຢາກໄດ້ຍິນໄດ້ຟັງ. ການຮັບຟັງກໍ່ໝາຍຄວາມວ່າບໍ່ພຽງແຕ່ໄດ້ຍິນຄຳເວົ້າເທົ່ານັ້ນ. <u>ການຟັງໝາຍຄວາມວ່າພວກເຮົາໄດ້ຍິນພຣະວັຈນະຂອງພຣະເຈົ້າແລະປະຕິບັດຕາມ</u>. ພວກເຮົາເຫັນສິ່ງນີ້ກ່ຽວຂ້ອງກັບພຣະເຈົ້າ.

ພຣະເຈົ້າຊົງສະດັບຮັບຟັງຄຳອະທິຖານຂອງພວກເຮົາແລະຊົງປະຕິບັດຕາມນ້ຳພຣະທັຍຂອງພຣະອົງ. ເພື່ອຕອບແທນ, ໃນເມື່ອພວກເຮົາໄດ້ຍິນພຣະວັຈນະຂອງພຣະເຈົ້າ, ພວກເຮົາປະຕິບັດຕາມ. ສະນັ້ນ, ມັນຈະມີຜົນດີແນວໃດຖ້າຄຣິສຕະຈັກເມືອງເອເຟໂຊໄດ້ຖິ້ມໃຈເກົ່າເອົາໃຈໃໝ່ ແລະເລີ່ມນຳໃຊ້ໃນສິ່ງທີ່ພຣະວິນຍານກຳລັງບອກ

ພວກເຂົາໃຫ້ເຮັດ? ຄຳຕອບກໍຄື: ໃນທີ່ສຸດພວກເຂົາເຈົ້າຈະດຳເນີນຢູ່ເປັນຜູ້ຊະນະກັບພຣະຄຣິດຕລອດໄປເປັນນິດ. ຜູ້ທີ່ຕິດຕາມພຣະຄຣິດຢ່າງແທ້ຈິງ, ບໍ່ພຽງແຕ່ດ້ວຍຄຳເວົ້າຫຼືການກະທຳເທົ່ານັ້ນ, ແຕ່ຮ່ວມກັບພຣະຄຣິດຄື**ຄວາມຮັກຄັ້ງແລກ**ຂອງພວກເຂົາເຈົ້າ, ຈະປະສົບກັບຊັຍຊະນະທີ່ແທ້ຈິງຂອງພຣະເຢຊູແລະມີສ່ວນຮ່ວມໃນຂອງປະທານແຫ່ງຊີວິດນິຣັນທີ່ມາ**ຈາກ**ພຣະອົງເທົ່ານັ້ນ.

ບໍຣິສັດໂທຣະສັບມືຖືບໍຣິສັດນຶ່ງໄດ້ໃຊ້ຄຳຂວັນ (ໂຄສະນາ) ນີ້ມາຫຼາຍປີ "**ເຈົ້າໄດ້ຍິນຂ້ອຍບໍ່?**"("*Do you hear me now?*"). ໃນຂນະທີ່ທາງບໍຣິສັດບໍ່ໄດ້ໃຊ້ຄຳໂຄສະນານີ້ອີກແລ້ວ, ຂ້າພະເຈົ້າຄິດວ່າຄຳເວົ້ານີ້ເໝາະສົມທີ່ສຸດສຳລັບຜູ້ທີ່ກຳລັງຕິດຕາມພຣະຄຣິດ. ໃນຂນະທີ່ອົງພຣະວິນຍານບໍຣິສຸດກຳລັງເວົ້າໃສ່ໃນຊີວິດຂອງພວກເຮົາແລະຊົງຖາມພວກເຮົາວ່າ:"**ເຈົ້າສາມາດໄດ້ຍິນຂ້ອຍບໍ່?**" ແມ່ນຫຍັງຈະເປັນຄຳຕອບຂອງທ່ານຕໍ່ຄຳຖາມນີ້? **ຂໍໃຫ້ພວກເຮົານຳມາໃສ່ໃຈໄວ້ສິ່ງທີ່ພວກເຮົາໄດ້ຍິນໃນຂ່າວສານນີ້ ແລະດຳເນີນຊີວິດເໝືອນດັ່ງພວກຜູ້ຊະນະ!**

*ມີບາງວິທີທາງປະຕິບັດແນວໃດທີ່ກຸ່ມຂອງພວກເຮົາສາມາດສະແດງຄວາມຮັກຕໍ່ຄົນອື່ນໄດ້?*

## ນຳໃຊ້ໃນຊີວິດ:

ທ່ານຈະຍຶດໝັ້ນເປັນພື້ນຖານທຸກສິ່ງທຸກຢ່າງທີ່ທ່ານເຮັດໃນຄວາມຮັກສຳລັບພຣະຄຣິດໂດຍວິທີໃດ?
ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຟັງ.** ຈົ່ງໃຊ້ເວລາແຕ່ລະວັນເຂົ້າເຝົ້າດ່ຽວກັບພຣະເຈົ້າ. ຈົ່ງອ່ານພຣະຄັມພີ, ແລະໃນຂະນະທີ່ທ່ານອ່ານ, ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ທ່ານໄດ້ຍິນສິ່ງທີ່ພຣະວິນຍານບຣິສຸດຊົງເວົ້າກັບທ່ານ. ຈົ່ງຍອມເຊື່ອຟັງແລະປະຕິບັດໃນສິ່ງທີ່ທ່ານໄດ້ອ່ານ.
- **ຈົ່ງຮັກ.** ຈົ່ງບັນທຶກຫົນທາງ(ວິທີການ)ທີ່ພຣະເຈົ້າໄດ້ຊົງເປີດເຜີຍຄວາມຮັກຂອງພຣະອົງແກ່ທ່ານ. ຈົ່ງອະທິຖານແລະສະແດງຄວາມຮັກຄືນຕໍ່ພຣະອົງ. ຈົ່ງທູນຂໍໃຫ້ພຣະອົງຊ່ວຍທ່ານຮັກພຣະອົງເພື່ອເປັນການຕອບແທນແລະຮັກສາຄວາມຮັກນັ້ນໄວ້ເໜືອທຸກສິ່ງທຸກຢ່າງທີ່ທ່ານປະຕິບັດ.
- **ຈົ່ງກັບຄືນ.** ຊົ່ວລະຍະເວລາຂອງໂຣຄລະບາດ ໂຄວິດ-19, ຜູ້ເຊື່ອຫຼາຍຄົນປ່ຽນນິສັຍເຫີນຫ່າງຈາກການນະມັສການ ຫຼືເຫີນຫ່າງຈາກກຸ່ມສຶກສາພຣະຄັມພີ. ດ້ວຍແນວຄຶດຂອງ***"ກັບຄືນສູ່ຄວາມຮັກຄັ້ງທຳອິດຂອງທ່ານ"***, ຈົ່ງໃຫ້ກຳລັງໃຈແກ່ຄົນອື່ນດ້ວຍຄວາມກະຣຸນາເພື່ອຈະໄດ້ກັບຕ່າວຄືນມາແບ່ງປັນຊີວິດກັບພຣະກາຍຂອງພຣະຄຣິດ (ທີ່ພຣະວິຫານຂອງພຣະເຈົ້າ) ໂດຍຜ່ານການນະມັສການ ຫຼື ໂດຍຜ່ານກຸ່ມສຶກສາພຣະຄັມພີ.

ພວກເຮົາສ່ວນຫຼາຍສາມາດຈື່ໄດ້ວ່າຄວາມຮັກໝານ້ອຍ (puppy love) ມີຄວາມຮູ້ສຶກຄືແນວໃດ. ຄວາມຮັກອັນເລິກເຊິ່ງແລະໝັ້ນຄົງຂອງອົງພຣະຄຣິດຍັງເໜືອກວ່ານັ້ນ. **ຈົ່ງໃຫ້ກຳລັງໃຈແກ່ກັນແລະກັນໃຫ້ຮັກເໝືອນພຣະອົງຊົງຮັກ!**

**ອຸປຖັມໂດຍລາວຊາວເຫີນບັບຕິສສັມພັນ http://lsbf.us ໂດຍ SSK**